ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໗໕/ປພຖຊ/໐໓໑໑໑໐**

# ຖະແລງການ

## ສາກົນ ບີບຮັດພັກຮັດ ໃຫ້ເລັ່ງປະຕິບັດ ແຜນສ້າງສັນຕິພາບໂລກ

ດຽວນີ້, ບັນດາອົງການຈັດຕັ້ງສາກົນ ໄດ້ບີບຮັດ ໃຫ້ພັກຮັດ ເຄົາຣົບຕໍ່ສິດທິເສຣີພາບຂອງປະຊາຊົນ ດ້ວຍການ ເລັ່ງໃຫ້ປະຕິບັດ ແຜນສ້າງສັນຕິພາບໂລກ ໂດຍໄວ.

ເງື່ອນໄຂທາງດ້ານມະນຸສທັມ ທີ່ອຳນວຍໃຫ້ປະເທດລາວມີສັນຕິພາບ ກໍຄື: ພັກຮັດ ຕ້ອງເຄົາຣົບຕໍ່ ສິດທິເສຣີພາບ ຂອງປະຊາຊົນ. ພວກເຂົາ ຕ້ອງມີຊີວິດການເປັນຢູ່ທີ່ດີ, ມີການຮັບປະກັນ ແລະ ມີຄວາມ ປອດພັຍຢູ່ໃນສັງຄົມ. ສ່ວນພາຫະນະທີ່ເປັນກົນໄກຊຸກຍູ້ ໃຫ້ມີສັນຕິພາບນັ້ນ, ບັນດາອົງການ ຈັດຕັ້ງສາກົນ ແລະ ປະເທດເພື່ອນມິຕໃນທົ່ວໂລກ ໄດ້ທຸ້ມເທໃຫ້ການຊ່ວຍເຫລືອພັກຮັດ ຢ່າງຫລວງຫລາຍ ເພື່ອພັທນາປະຊາຊົນລາວ ໃຫ້ມີຄວາມຮູ້ທາງດ້ານກະສິກຳ, ດ້ານສາທາຣະນະສຸຂ, ດ້ານການສຶກສາ ຄວບຄູ່ກັນໄປ ກັບຄວາມຮັບຮູ້ ທາງດ້ານ ສິດທິເສຣີພາບ ຂອງພົລເມືອງ ຕາມກົດໝາຍຣັຖທັມນູນ ແລະໃຫ້ຄວາມຮູ້ ກ່ຽວກັບ ອັນຕຣາຍ ຈາກຣະເບີດ ທີ່ຍັງບໍ່ທັນແຕກ ຫລັງສົງຄາມວຽດນາມ.

ສຳລັບການກໍ່ສ້າງພື້ນຖານເສຖກິດ ໃຫ້ເປັນໄປຕາມກົນໄກຕລາດເສຣີນັ້ນ, ທະນາຄານໂລກ, ທະນາຄານ ພັທນາ ເອເຊັຽ ແລະທະນາຄານອື່ນໆ ກໍໄດ້ປ່ອຍເງິນກູ້ດອກເບັ້ຽຕໍ່າລະຍະຍາວ ໃຫ້ແກ່ບໍຣິສັທ ລົງທຶນ ຊຸດຄົ້ນ

ບໍ່ຄໍາ, ສ້າງເຂື່ອນໄຟຟ້າ, ສໍາປະທານປູກຕົ້ນໄມ້ອຸດສາຫະກໍາ ແລະການກະເສດ, ສ້າງເຂດ ເສດຖະກິດ ພິເສດ, ສ້າງສນາມກ໊ອຟ, ສ້າງທາງຣົດໄຟ, ສ້າງຂົວຂ້າມນໍ້າຂອງ, ສ້າງເສັ້ນທາງລໍາລຽງສິນຄ້າ ຕາວັນອອກ-ຕາວັນຕົກ ເສື່ອມຕໍ່ປະເທດໃນພາກພື້ນເອເຊັຽ ເພື່ອຂຍາຍສິນຄ້າເສຣີ-ເອຊຽນ. ນອກຈາກນີ້, ກໍຍັງກະກຽມຕລາດຫລັກຊັພ ແລະ ການເຂົ້າເປັນສາມະຊິກການຄ້າໂລກອີກດ້ວຍ. *ການຊ່ວຍເຫລືອຕ່າງໆ ເຫລົ່ານີ້, ແມ່ນຄວາມສໍາເຣັດໃນການປະຕິບັດ ແຜນສ້າງສັນຕິພາບໂລກ ຂອງສາກົນຢູ່ລາວ.*

ດຽວນີ້, ປະເທດລາວ ມີເສັ້ນທາງຄົມມະນາຄົມຂົນສົ່ງ, ມີພລັງງານໄຟຟ້າ, ມີບໍ່ຄໍາ, ມີຣະບົບສື່ສານໂທຣະຄົມມະນາຄົມ, ມີການຄ້າ, ການລົງທຶນ ເປັນໄປຕາມກົນໄກຕລາດເສຣີ. -ມີທຸກຢ່າງ ທີ່ເອື້ອອໍານວຍໃຫ້ປະຊາຊົນລາວ ໄດ້ມີວຽກເຮັດງານທໍາ ແລະມີຊີວິດການເປັນຢູ່ ດີຂື້ນກວ່າເດີມ.

ການລົງທຶນ ຣະຫວ່າງ ລາວ ກັບສະຫະຣັດອະເມຣິກາ ປີ 2008 ມີມູນຄ່າ 60 ລ້ານດອນລາສະຫະຣັດ. ນອກຈາກມີການຄ້າປົກກະຕິ ກັບລາວແລ້ວ, ສະຫະຣັດອະເມຣິກາ ຍັງຍົກເລີກ ການເກືອດຫ້າມ ທະນາຄານ ການຄ້າ ຂາເຂົ້າ-ຂາອອກ ເພື່ອໃຫ້ບໍຣິສັທຕ່າງໆ ເຂົ້າມາລົງທຶນໄດ້ສດວກຍິ່ງຂຶ້ນ, ແລະການພົວພັນດ້ານການຄ້າ ກັບ ສາທາຣະນະຣັດປະຊາທິປະໄຕປະຊາຊົນຈີນ ກໍເພີ້ມຂຶ້ນ, ມີມູນຄ່າເຖິງ 442 ລ້ານດອນລາສະຫະຣັດ. ໃນນັ້ນ, ສິນຄ້ານໍາເຂົ້າຈາກລາວ ມີເຖິງ 222 ລ້ານດອນລາສະຫະຣັດ. ການເຂົ້າມາລົງທຶນໃນລາວ ເພີ້ມຂຶ້ນເປັນລໍາດັບ, ເປັນຕົ້ນ: ໃນປີ 2006, ມີມູນຄ່າ ພຽງແຕ່ 319 ລ້ານ ດອນລາສະຫະຣັດ. ປີ 2007 ມີມູນຄ່າ 785 ລ້ານດອນລາສະຫະຣັດ ແລະປີ 2008 ເພີ້ມຂຶ້ນເຖິງ 854 ລ້ານດອນລາສະຫະຣັດ. ເຮັດໃຫ້ເສດຖະກິດຂອງລາວຂຍາຍຕົວ ເຖິງ 6%. ແຕ່...ປະຊາຊົນລາວ ກໍຍັງທຸກຍາກ ລໍາບາກ ເໝືອນເດີມ. ຕຣົງກັນຂ້າມ ກັບ ຄນະ ພັກຣັດ ຜູ້ມີອໍານາດອິດທິພົນ; ລູກຫລານ, ຍາດພີ່ນ້ອງ, ຈຸ້ມເຈື້ອ ວົງຕະກຸນ ເກີດມີຄວາມລໍ້າລວຍຮັ່ງມີຂຶ້ນ ຢ່າງບໍ່ຢຸດຢັ້ງ.

ທ່ານ ໜູຮັກ ພູມສວັນ ນັກປະຕິວັດອາວຸໂສ, ເມື່ອຍັງມີຊີວິດຢູ່, ໄດ້ກ່າວກັບຊາວໜຸ່ມກັມບານຢູ່ແຂວງຄໍາມ່ວນ ກ່ຽວກັບການປູກເຂົ້າບໍ່ກຸ້ມກິນ, ທ່ານເວົ້າວ່າ "**ຂາດນໍ້າ, ພັກຣັດ ກໍເອົານໍ້າມາໃຫ້. ຂາດຝຸ່ນ, ພັກຣັດກໍເອົາຝຸ່ນມາໃຫ້.**" ການເກັບກ່ຽວເຂົ້າ ກໍຍັງບໍ່ກຸ້ມກິນຄືເກົ່າ.- ທ່ານບອກວ່າ "**ຕ້ອງປ່ຽນແນວເຂົ້າປູກ**".

ອັນນີ້, ກໍເຊັ່ນດຽວ. ໃນເມື່ອອົງການຈັດຕັ້ງສາກົນ ແລະປະເທດເພື່ອນມິດໃນທົ່ວໂລກ ໄດ້ທຸ້ມເທ ໃຫ້ການຊ່ວຍເຫລືອຢ່າງມະຫາສານ ສ້າງພື້ນຖານການເມືອງ, ເສດຖກິດ, ວັທນະທັມສັງຄົມໃຫ້ສອດຄ່ອງ ກັບສັຕວັດທີ 21 ຢູ່ໃນລາວ ໄດ້ຢ່າງສຳເຣັດຜົນແລ້ວ! ເປັນຫຍັງປະຊາຊົນລາວ ຈຶ່ງບໍ່ມີສິດທິເສຣີພາບ, ຍັງໄດ້ຮັບຄວາມເດືອດຮ້ອນຢູ່ເໝືອນເດີມ. **ສນັ້ນ, ອົງການຈັດຕັ້ງສາກົນແລະປະເທດເພື່ອນມິດ ໃນທົ່ວໂລກ ຕ້ອງແກ້ທີ່ຕົ້ນຕໍຂອງບັນຫາ ຄື** ***ຕ້ອງປ່ຽນຣັຖບານ*** **ນັ້ນເອງ!.**

ພວກເຮົາ ຂໍຮຽກຮ້ອງມາຍັງອົງການຈັດຕັ້ງສາກົນ ແລະປະເທດເພື່ອນມິດໃນທົ່ວໂລກ ຈົ່ງໄດ້ຢຸດຕິໃຫ້ການຊ່ວຍເຫລືອລາວອີກຕໍ່ໄປ. ເຖິງແມ່ນວ່າ ການອັດປະຕູສະຖານທູດສວີເດັນ ໄປໃຫ້ການຊ່ວຍເຫລືອປະເທດອື່ນ, ເພື່ອເຕືອນໃຫ້ພັກຣັດ ສປປລາວ. ທົບທວນເບິ່ງຕົນເອງຄືນໃໝ່ ເປັນຕົວຢ່າງມາແລ້ວ ກໍຕາມ, ກໍຂໍໃຫ້ເພີ້ມການບີບຮັດນັ້ນ ແຮງຂຶ້ນກວ່າເກົ່າ. ໃຫ້ພັກຣັດ ສປປລາວ. ອອກມາໂອ້ລົມກັບ ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄື ປະຊາຊົນລາວທັງຊາດ, ເພື່ອສ້າງ ຄວາມສາມະຄີປອງດອງຊາດ, ເຮັດໃຫ້ການປະສານງານຮ່ວມ ຣະຫວ່າງລາວສອງຝ່າຍ ເກີດມີຂຶ້ນໂດຍໄວ, ພ້ອມກັນສ້າງເມືອງລາວຄືນໃໝ່ໃຫ້ມີຄວາມຈເຣີນສີວິໄລ ໄປຮອດ 100 ປີ.

ປະຊາຊົນມີໄຊຍ໌ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ

ຂໍຂອບໃຈ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ຫ້ອງການປະທານພັກ**

**ອານຈານ ສົມນຶກ ຟອງສູວັນ**

**ວັນທີ ໑໑ ມີນາ ໒໐໑໐.**